# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 19 ມິຖຸນາ 2022 (06-19-2022)

---

## ຊົງສະຖິດຢູ່ໂດຍພຣະວິນຍານ

*ບັນຫາຣົດຍົນທີ່ຮ້າຍແຮງທີ່ສຸດທີ່ທ່ານມີປະສົບການແມ່ນຫຍັງ?*

**ຈຸດສຳຄັນໃນບົດຮຽນ:** ການຊົງສະຖິດຢູ່ດ້ວຍຂອງພຣະວິນຍານບໍຣິສຸດໃນຊີວິດຂອງພວກເຮົາຢືນຢັນເຖິງຄວາມສໍາພັນຂອງພວກເຮົາກັບພຣະເຈົ້າ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຕອນທີ່ຂ້າພະເຈົ້າຢູ່ໃນມະຫາວິທຍາລັຍ, ຂ້າພະເຈົ້າໄດ້ເດີນທາງທ້າຍສັບປະດານຶ່ງຈາກມະຫາວິທຍາລັຍບັບຕິສ ທີ່ຣັຖໂອກລາໂຮມາ(Oklahoma)ກັບໄປບ້ານຂອງຂ້າພະເຈົ້າທີ່ຣັຖເທັກຊັດສ໌(Texas). ມັນແມ່ນຕອນກາງຄືນທີ່ມີຝົນຕົກ, ແລະນີ້ແມ່ນຊ່ວງເວລາດົນນານກ່ອນມີໂທຣະສັບມືຖື. ຂ້າພະເຈົ້າໄດ້ຍ່າງກັບໄປຫາປ້ຳນ້ຳມັນເພື່ອຊອກຫາຕູ້ໂທຣະສັບ.

ເຖິງແມ່ນວ່າຂົວຈະບໍ່ຍາວ, ແຕ່ການຍ່າງຜ່າຝົນໄປເຮັດໃຫ້ຂ້າພະເຈົ້າຮູ້ສຶກແຕກຕ່າງ. ຂ້າພະເຈົ້າປຽກໝົດ! ຂ້າພະເຈົ້າບໍ່ສາມາດເບິ່ງເຫັນໄກກ່ວາ 10 ຟຸດຂ້າງໜ້າຕົນເອງ. ໃນຂນະທີ່ຣົດຂົນສົ່ງໃຫຍ່ແລ່ນຜ່ານໄປ, ລົມໄດ້ພັດໝູນຮອບຕົວຂ້າພະເຈົ້າ, ແລະຂົວໄດ້ສັ່ນສະເທືອນຢ່າງຮຸນແຮງ. ມັນບໍ່ໄດ້ໃຊ້ເວລາດົນສຳລັບຂ້າພະເຈົ້າທີ່ຈະມີຄວາມຮູ້ສຶກໂດດດ່ຽວແລະຢ້ານກົວ. ຂ້າພະເຈົ້າເລີ້ມຮ້ອງເພງໃນຂນະທີ່ຍ່າງໄປ: ເພງຄຣິສຕຽນທຸກເພງທີ່ຂ້າພະເຈົ້າຮູ້ຈັກ ຈາກເພງສັ້ນເຖິງເພງນະມັສການເກົ່າໆໃນປຶ້ມເພງ. ຂ້າພະເຈົ້າຍັງປຽກໝົດທັງຕົວ, ແລະມັນຍັງມືດຢູ່, ແຕ່ຄວາມມືດມົນໃນຫົວໃຈຂອງຂ້າພະເຈົ້າຄ່ອຍໆຈືດຈາງໄປ. <u>ຂ້າພະເຈົ້າມີ ຄວາມຮູ້ສຶກເໝືອນກັບວ່າພຣະເຈົ້າຊົງຍ່າງຄຽງຂ້າງໄປກັບຂ້າພະເຈົ້າ.</u>

ພວກເຮົາຕ່າງກໍມີຕອນທີ່ຢູ່ໂດດດ່ຽວແຕ່ວ່າໃນຖານະທີ່ພວກເຮົາເປັນຜູ້ຕິດຕາມອົງພຣະເຢຊູ. ພວກເຮົາບໍ່ເຄີຍໄດ້ຢູ່ຢ່າງໂດດ ດ່ຽວຈັກເທື່ອ. ພວກເຮົາຈະໄດ້ສຶກສາເພີ້ມເຕີມອີກກ່ຽວກັບການຊົງສະຖິດຢູ່ຂອງພຣະເຈົ້າໃນນາມຂອງ **<u>ອົງພຣະວິນຍານບໍຣິສຸດ</u>** ໃນຊ່ວງການສຶກສາໃນພາກນີ້.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ໂຣມ 8:9-11</u>

*9 ອັນນຶ່ງ, ຖ້າແມ່ນພຣະວິນຍານຂອງພຣະເຈົ້າຊົງສະຖິດຢູ່ໃນເຈົ້າທັງຫຼາຍຢ່າງແທ້ຈິງແລ້ວ ພວກເຈົ້າກໍບໍ່ຢູ່ຝ່າຍມະນຸດແຕ່ຢູ່*
*ຝ່າຍພຣະວິນຍານ ແຕ່ຖ້າຜູ້ໃດບໍ່ມີພຣະວິນຍານຂອງພຣະຄຣິດ ຜູ້ນັ້ນກໍບໍ່ເປັນຂອງພຣະອົງ. 10 ແຕ່ຖ້າພຣະຄຣິດຊົງຢູ່ໃນເຈົ້າ*
*ທັງຫຼາຍແລ້ວ, ເຖິງແມ່ນວ່າເນື້ອຕົວຂອງພວກເຈົ້າຕາຍແລ້ວເພາະຄວາມຜິດບາບ ແຕ່ວິນຍານຈິດຂອງເຈົ້າກໍມີຊີວິດຢູ່ເພາະ*
*ຄວາມຊອບທັມ. 11 ຖ້າພຣະວິນຍານຂອງພຣະອົງ ຜູ້ຊົງບັນດານໃຫ້ພຣະເຢຊູຊົງຄືນພຣະຊົນນັ້ນ ຊົງສະຖິດຢູ່ໃນພວກເຈົ້າ*
*ພຣະອົງຜູ້ຊົງບັນດານໃຫ້ພຣະເຢຊູຄຣິດຊົງຄືນພຣະຊົນແລ້ວນັ້ນກໍຈະຊົງບັນດານໃຫ້ກາຍທີ່ຕ້ອງຕາຍຂອງພວກເຈົ້າຄືນມີຊີ*
*ວິດໃໝ່ ດ້ວຍຣິດແຫ່ງພຣະວິນຍານຂອງພຣະອົງທີ່ຊົງສະຖິດຢູ່ໃນພວກເຈົ້າ.*

ອັຄສາວົກໂປໂລໄດ້ປຽບທຽບສອງວິທີທາງໃນການດໍາເນີນຊີວິດຄື: "ຝ່າຍເນື້ອໜັງ" ແລະ "ຝ່າຍພຣະວິນຍານ". ໃນ 8 ຂໍ້ແລກຂອງບົດນີ້, ໂປໂລໄດ້ບັນລະຍາຍກ່ຽວກັບບັນດາຜູ້ທີ່ດໍາເນີນຊີວິດໃນຝ່າຍເນື້ອໜັງ. ຜູ້ຄົນດໍາເນີນຊີວິດຝ່າຍເນື້ອໜັງໄດ້

ຈົດຈໍ່ໃສ່ໃນຄວາມສຸກແລະຄວາມກັງວົນຂອງຕົນເອງ. ພຶດຕິກັມດັ່ງກ່າວຖືກປະນາມໂດຍກົດລະບຽບຂອງພຣະຄັມພີເດີມ. ດັ່ງນັ້ນ, ພວກເຂົາ "ເປັນສັດຕູກັບພຣະເຈົ້າ" (ຂໍ້ 7), ແລະພວກເຂົາ "ບໍ່ສາມາດເຮັດໃຫ້ພໍພຣະທັຍ" ພຣະອົງ (ຂໍ້ 8). ຜົນສຸດທ້າຍຂອງວິທີການດຳເນີນຊີວິດປະເພດນີ້ກໍຄືຄວາມຕາຍ.

<u>ຊີວິດຝ່າຍພຣະວິນຍານນັ້ນມີຄວາມແຕກຕ່າງ</u>. ຜູ້ຄົນທີ່ດຳເນີນຊີວິດຝ່າຍພຣະວິນຍານໄດ້ຫັນຫຼັງໃຫ້ບາບ(ຖິ້ມໃຈເກົ່າເອົາໃຈໃໝ່)ຂອງພວກເຂົາເຈົ້າ ແລະໂອບກອດເອົາຂ່າວປະເສີດ. ພຣະເຢຊູຊົງໄດ້ຮັບໂທດຄວາມບາບຂອງພວກເຮົາ, ບັນດາພວກທີ່ເປັນຂອງພຣະອົງບໍ່ໄດ້ຢູ່ພາຍໃຕ້ທັມບັນຍັດອີກຕໍ່ໄປ. ບັນດາຜູ້ທີ່ດຳເນີນຊີວິດຝ່າຍພຣະວິນຍານສຸມໃສ່ຄວາມສົນໃຈໄປໃນສິ່ງທີ່ເປັນຂອງພຣະອົງ(ຂໍ້ 5)ນັ້ນຄື: ຄວາມດີງາມແລະພຣະຄຸນຂອງພຣະອົງ, ພຣະຣາຊກິຈຂອງພຣະອົງຕໍ່ມະນຸສໂລກ ແລະການສາມັກຄີທັມທີ່ພວກເຂົາເຈົ້າມີກັບພຣະອົງ. ເພາະຄວາມສັມພັນຂອງພວກເຂົາເຈົ້າກັບອົງພຣະຄຣິດ, ພວກເພິ່ນຈະບໍ່ປະສົບກັບການລົງໂທດຈາກພຣະເຈົ້າຈັກເທື່ອ.

ເມື່ອທ່ານໂປໂລໄດ້ຂຽນ: "...*ພວກເຈົ້າກໍບໍ່ຢູ່ຝ່າຍມະນຸດ, ແຕ່ຢູ່ຝ່າຍພຣະວິນຍານ...*" (ຂໍ້ 9), ທ່ານໄດ້ຣະບຸເຖິງຊາວໂຣມັນຄຣິສຕຽນກັບວິຖີຊີວິດທີ່ສອງ-<u>ຊີວິດຝ່າຍພຣະວິນຍານ</u>. ທ່ານຕິດຕາມປໂຍກນັ້ນໂດຍທັນທີທັນໃດດ້ວຍຄຳວ່າ "ຖ້າ". "...*ຖ້າແມ່ນພຣະວິນຍານຂອງພຣະເຈົ້າຊົງສະຖິດຢູ່ໃນເຈົ້າທັງຫຼາຍຢ່າງແທ້ຈິງແລ້ວ...*" ຄຳວ່າ "ຖ້າ" ໃນພາສາອັງກິດຟັງຄືວ່າອາດຈະເປັນ ຫຼື ບໍ່ເປັນຄວາມຈິງ, ແຕ່ຄຳເວົ້ານີ້ໃນພາສາກຣີກຢືນຢັນວ່າເປັນຄວາມຈິງ. ພວກທີ່ເປັນຂອງພຣະຄຣິດມີພຣະວິນຍານບໍຣິສຸດຊົງສະຖິດຢູ່ໃນພວກເຂົາເຈົ້າ.

*ແມ່ນຫຍັງຄືໝາຍສຳຄັນວ່າພຣະວິນຍານບໍຣິສຸດຊົງທຳງານຢູ່ໃນຊີວິດຂອງຄຣິສຕຽນ?*

ເມື່ອຄົນນຶ່ງຮັບເອົາພຣະຄຣິດ, ພຣະວິນຍານບໍຣິສຸດມາສະຖິດຢູ່ພາຍໃນພວກເຂົາ. ພຣະວິນຍານປອບໃຈ, ຊີ້ນຳ, ແກ້ໄຂ, ແລະ ຮັບປະກັນ. ທາງກົງກັນຂ້າມກໍແມ່ນຄວາມຈິງ: ຖ້າຄົນນຶ່ງບໍ່ມີພຣະວິນຍານຊົງສະຖິດຢູ່ດ້ວຍ, ຜູ້ນັ້ນກໍບໍ່ແມ່ນຜູ້ຕິດຕາມພຣະຄຣິດ. ທ່ານໂປໂລພັນລະນາເຖິງຮ່າງກາຍຂອງພວກເຮົາວ່າ "ຕາຍແລ້ວໃນບາບ." ພວກທີ່ເຊື່ອມີຜົນປໂຍດແລະຄວາມໄດ້ປຽບຫຼາຍກວ່າ, ແຕ່ພວກເຮົາບໍ່ສາມາດຫຼີກເວັ້ນການຕາຍຝ່າຍເນື້ອໜັງຮ່າງກາຍ. ຮ່າງກາຍທີ່ເປື່ອຍເໜົ່າຂອງພວກເຮົາກຳລັງຊຸດໂຊມລົງ, ແລະມື້ນຶ່ງພວກມັນກໍຈະຕາຍ. ຄວາມຕາຍເປັນຜົນມາຈາກບາບທີ່ຫຼີກລ້ຽງບໍ່ໄດ້ໃນໂລກ, ແຕ່ວ່າພວກເຮົາສາມາດປະສົບກັບຊີວິດນິລັນດອນ "ເພາະຄວາມຊອບທັມ." ຄວາມຊອບທັມນັ້ນບໍ່ແມ່ນຂອງພວກເຮົາ; ພວກເຮົາຢູ່ໄກຈາກຄວາມດີພໍທີ່ຈະຖືກເອີ້ນວ່າເປັນຄົນຊອບທັມ. ໂປໂລໄດ້ກ່າວເຖິງຄວາມຊອບທັມຂອງພຣະຄຣິດ, ແລະພວກເຮົາໄດ້ຮັບຄວາມຊອບທັມຂອງພຣະອົງໃນເວລາທີ່ພວກເຮົາເປັນຂອງພຣະອົງ. ພຣະເຈົ້າໄດ້ຍົກພຣະຄຣິດໃຫ້ມີຊີວິດຢູ່ໃນການຟື້ນຄືນພຣະຊົນ, ແລະ ໂດຍຜ່ານການສະຖິດຢູ່ຂອງພຣະວິນຍານບໍຣິສຸດພຣະອົງໄດ້ໃຫ້ເຮົາມີຊີວິດໃໝ່ໃນພຣະຄຣິດ. ເຖິງແມ່ນວ່າຮ່າງກາຍຂອງເຮົາຕາຍ, ແຕ່ພຣະວິນຍານເປັນການຄ້ຳປະກັນວ່າພຣະອົງໄດ້ປະທານຊີວິດໃຫ້ເຮົາ-ແລະ <u>ເຮົາກໍມີຊີວິດ!</u>

## 2. <u>ໂຣມ 8:12-14</u>

*12 ເຫດດັ່ງນັ້ນພີ່ນ້ອງທັງຫຼາຍເອີຍ, ພວກເຮົາໄດ້ເປັນໜີ້ ແຕ່ບໍ່ແມ່ນໜີ້ໃນທາງເນື້ອກາຍຊຶ່ງດຳເນີນຊີວິດຕາມຢ່າງມະນຸດນັ້ນ.*
*13 ເພາະຖ້າເຈົ້າທັງຫຼາຍດຳເນີນຊີວິດຕາມຢ່າງເນື້ອກາຍ ພວກເຈົ້າຄືຈະຕາຍ ແຕ່ຖ້າໂດຍຣິດພຣະວິນຍານພວກເຈົ້າໄດ້ທຳລາຍການຂອງຝ່າຍເນື້ອກາຍເສັຽ ເຈົ້າກໍຄືຈະມີຊີວິດຢູ່. 14 ເພາະວ່າ ພຣະວິນຍານຂອງພຣະເຈົ້າຊົງນຳພາຜູ້ໃດ ຜູ້ນັ້ນແຫຼະ,*
*ເປັນບຸດຂອງພຣະເຈົ້າ.*

ບາງຄົນເຊື່ອວ່າການທີ່ຈະເປັນ "ຄວາມຈິງ" ໃຫ້ກັບຕົນເອງໄດ້, ພວກເຂົາເຈົ້າຈຳເປັນພຽງແຕ່ຟັງແລະເຮັດຕາມຕົວເອງ. ເຂົາເຈົ້າອາດຈະເວົ້າສິ່ງຕ່າງໆເຊັ່ນວ່າ:

- “ຂ້າພະເຈົ້າພຽງແຕ່ບໍ່ໄດ້ຮັກນາງອີກຕໍ່ໄປ ສະນັ້ນມັນເປັນການບໍ່ຖືກຕ້ອງທີ່ຈະຍັງແຕ່ງງານກັບນາງຢູ່.”
- “ມັນຮູ້ສຶກວ່າຖືກຕ້ອງ, ສະນັ້ນຂ້ອຍກໍເລີຍເຮັດ.”
- “ຂ້ອຍໄດ້ບອກລາວຢ່າງແທ້ຈິງສິ່ງທີ່ຂ້ອຍຄິດກ່ຽວກັບລາວ, ແລະຖ້າວ່າມັນຜິດ, ຂ້ອຍກໍ່ບໍ່ສົນໃຈດອກ.”

ຖ້ອຍຄຳເຫຼົ່ານີ້ແມ່ນການສເລີມສລອງຊີວິດຝ່າຍເນື້ອໜັງ. ນັ້ນແມ່ນຊີວິດທີ່ຫ່າງໄກຈາກພຣະຄຣິດ- ແມ່ນຊີວິດທີ່ເຫັນຕົວເອງເປັນຄວາມສຳຄັນສຸດຍອດ. ຂ້ອຍບໍ່ຜູກພັນກັບໃຜນອກຈາກຕົນເອງ. <u>ນັ້ນແມ່ນການເປັນຢູ່ທີ່ໂສກເສົ້າແທ້ໆ</u>! ໃນທາງກົງກັນຂ້າມ, ຜູ້ທີ່ຢູ່ໃນພຣະຄຣິດບໍ່ໄດ້ມີການບັງຄັບໃດໆທີ່ຈະດຳເນີນຊີວິດຕາມຝ່າຍເນື້ອໜັງ. ໃນອົງພຣະຄຣິດພວກເຮົາພົບເຫັນເຫດຜົນທີ່ດີກວ່າ, ວິຖີທາງໃໝ່ທີ່ປະເມີນຜົນວ່າຊີວິດນີ້ມີຄຸນຄ່າຣາຄາຫຼາຍເທົ່າໃດ. ໃນອົງພຣະຄຣິດ, ພວກເຮົາພົບສິ່ງທີ່ໃຫຍ່ຫຼວງເກີນກວ່າການດຳເນີນຊີວິດຕາມຄວາມປະສົງຂອງຝ່າຍເນື້ອໜັງ.

ຄວາມຈິງແລ້ວ, ໂປໂລໄດ້ເວົ້າວ່າ: *“ຖ້າເຈົ້າທັງຫຼາຍດຳເນີນຊີວິດຕາມຢ່າງເນື້ອກາຍ ພວກເຈົ້າຄົງຈະຕາຍ.”* ບຸກຄົນທີ່ສືບຕໍ່ດຳເນີນຊີວິດທີ່ມີນິສັຍຂອງຄວາມບາບແມ່ນມຸ່ງໜ້າໄປສູ່ຄວາມຕາຍ. ໂປໂລໄດ້ໃຫ້ຄວາມກົງກັນຂ້າມລະຫວ່າງການດຳເນີນຊີວິດ “ຕາມຝ່າຍເນື້ອໜັງ” (ຂໍ້ 13) ກັບວຽກງານຂອງຊາວຄຣິສຕຽນທີ່ “ກຳຈັດ(ປະຫານ)ການກະທຳຂອງຮ່າງກາຍ”. ໃນນາມຜູ້ທີ່ເຊື່ອ, ພວກເຮົາບໍ່ພຽງແຕ່ກຳຈັດຄວາມປາຖນາທາງບາບ ແລະບໍ່ຈັດການກັບມັນອີກເລີຍເທົ່ານັ້ນ. ກົງກັນຂ້າມ, ພວກເຮົາເຮັດຢູ່ສເມີເພື່ອເອົາຊະນະຄວາມບາບໃນຊີວິດຂອງພວກເຮົາ. ແຕ່ນີ້ບໍ່ແມ່ນສິ່ງທີ່ພວກເຮົາເຮັດສຳເລັດໄດ້ໂດຍລຳພັງຕົນເອງ. <u>ພວກເຮົາເຮັດສຳເລັດຜົນ</u> **<u>“ໂດຍອົງພຣະວິນຍານບໍຣິສຸດ.”</u>**

ບັນດາຜູ້ທີ່ດຳເນີນຊີວິດໂດຍພຣະວິນຍານບໍຣິສຸດ “<u>ເປັນບຸດຂອງພຣະເຈົ້າ</u>.” ນີ້ແມ່ນນຶ່ງໃນການປຽບທຽບທີ່ມັກຂອງທ່ານໂປໂລໃນການບັນລະຍາຍຄວາມສັມພັນຂອງພວກເຮົາກັບພຣະເຈົ້າ-ພວກເຮົາຖືກຮັບ(adopted)ເຂົ້າສູ່ຄອບຄົວຂອງພຣະອົງ. ບຸດຂອງພຣະເຈົ້າແມ່ນຜູ້ທີ່ “**<u>ຖືກການຊົງນຳພາໂດຍພຣະວິນຍານຂອງພຣະເຈົ້າ</u>**” (ຂໍ້ 14).

*ພວກເຮົາສາມາດຮຽນຮູ້ດີຂຶ້ນໃນການຮັບຮູ້ ການຊົງນຳພາຂອງພຣະວິນຍານບໍຣິສຸດແນວໃດ?*

## 3. <u>ໂຣມ 8:15 -17</u>

*15 ເຫດວ່າເຈົ້າທັງຫລາຍບໍ່ໄດ້ຮັບວິນຍານທີ່ໃຫ້ມີນິສັຍຢ່າງຂ້ອຍຂ້າ ຊຶ່ງນຳເຖິງຄວາມຢ້ານກົວອີກ ແຕ່ພວກເຈົ້າໄດ້ຮັບພຣະວິນຍານຜູ້ຊົງໃຫ້ເປັນບຸດຂອງພຣະເຈົ້າ ທີ່ໃຫ້ເຮົາທັງຫຼາຍຮ້ອງເອີ້ນພຣະເຈົ້າວ່າ, “ອັບບາ” ຄືພຣະບິດາ.*
*16 ຝ່າຍພຣະວິນຍານນັ້ນຊົງຮ່ວມເປັນພະຍານກັບວິນຍານຂອງເຮົາທັງຫຼາຍວ່າ ພວກເຮົາເປັນບຸດຂອງພຣະເຈົ້າ.*
*17 ແລະຖ້າເຮົາທັງຫຼາຍເປັນບຸດແລ້ວ ເຮົາກໍເປັນຜູ້ຮັບມໍຣະດົກດ້ວຍ ຄືເປັນຜູ້ຮັບມໍຣະດົກຈາກພຣະເຈົ້າ ແລະເປັນຜູ້ຮ່ວມຮັບມໍຣະດົກກັບພຣະຄຣິດ ຖ້າແມ່ນເຮົາທັງຫຼາຍໄດ້ທົນທຸກທໍຣະມານດ້ວຍກັນກັບພຣະອົງນັ້ນ ພວກເຮົາກໍຈະໄດ້ຮັບສະງ່າຣາສີກັບພຣະອົງເໝືອນກັນ.*

ກ່ອນທີ່ຈະມາເຖິງຄອບຄົວສັມພັນທີ່ພວກເຮົາມີໃນອົງພຣະຄຣິດ, ໂປໂລໄດ້ຂຽນກ່ຽວກັບ “ວິນຍານແຫ່ງຂ້ອຍຂ້າ” (ຂໍ້15) ແມ່ນຂໍ້ອ້າງອີງເຖິງການເປັນທາດ, ການເຊື່ອຟັງກົດບັນຍັດຂອງຊາວຢິວຢ່າງເຄັ່ງຄັດ. ດ້ວຍວິນຍານແຫ່ງຄວາມເປັນທາດນັ້ນຄວາມຢ້ານກົວກໍຕາມມາ. ແມ້ແຕ່ທຸກວັນນີ້, ຫຼາຍຄົນພະຍາຍາມຈະ “ເປັນຄົນດີ” ອອກມາຈາກຄວາມຢ້ານກົວການຕັດສິນປະຫານຊີວິດຂອງພວກເຂົາເຈົ້າ. ໃນອົງພຣະຄຣິດ, ພວກເຮົາຖືກປົດປ່ອຍໃຫ້ເປັນອິສລະຈາກຄວາມຢ້ານກົວນັ້ນ.

*ມັນມີຄວາມໝາຍແນວໃດສຳລັບທ່ານ ທີ່ວ່າທ່ານເປັນບຸດຂອງພຣະເຈົ້າ?*

ໃນອົງພຣະຄຣິດ, ພວກເຮົາຮັບເອົາ “<u>ພຣະວິນຍານແຫ່ງການຮັບເປັນບຸດ</u>”. ພຣະວິນຍານບໍຣິສຸດຊົງທຳງານຂອງການຮັບເປັນບຸດເຂົ້າໃນຄອບຄົວບັນດາຜູ້ທີ່ເຂົ້າມາຫາພຣະຄຣິດ. ວິນຍານແຫ່ງຄວາມເປັນທາດນຳໄປສູ່ຄວາມຢ້ານກົວ. ພຣະວິນຍານແຫ່ງການຮັບເປັນບຸດຊົງນຳພາພວກເຮົາໄປສູ່ “ການຮ້ອງເອີ້ນ ‘<u>ອັບບາ</u>’ ພຣະບິດາ”. ແທນທີ່ຈະຢ້ານກົວ, ພຣະວິນຍານແຫ່ງ

ການຮັບເປັນບຸດຊົງນຳພາໄປສູ່ຄວາມສຸກອັນເລີກຊຶ້ງຈາກພາຍໃນຈິດໃຈຂອງພວກເຮົາ ເພາະຄວາມສຳພັນອັນເລີກຊຶ້ງຂອງເຮົາກັບພຣະເຈົ້າ.

ໃນເມື່ອພວກເຮົາຖືກຮັບເປັນບຸດຂອງພຣະເຈົ້າ, ພວກເຮົາສາມາດມີຄວາມໝັ້ນໃຈວ່າພວກເຮົາເປັນຂອງພຣະເຈົ້າຊົ່ວນິຣັນ (ຕລອດການ). ພວກເຮົາຈະຮູ້ແນວໃດວ່າພວກເຮົາຖືກຮັບເອົາເປັນບຸດຂອງພຣະເຈົ້າ? ທ່ານໂປໂລຢືນຢັນວ່າພວກເຮົາມີພະຍານຢູ່ສອງຄົນ: "ພຣະວິນຍານຂອງພຣະເຈົ້າ ແລະ ວິນຍານຂອງເຮົາທັງຫຼາຍ" (ຂໍ້ 16). ນີ້ແມ່ນສິ່ງນຶ່ງຊຶ່ງເລີກໄປກວ່າ "ຄວາມຮູ້ສຶກ" ທີ່ພຣະເຈົ້າໄດ້ຊົງຮັບເອົາທ່ານໃຫ້ເປັນບຸດ. ການເປັນບຸດຂອງພຣະເຈົ້າເຮັດໃຫ້ພວກເຮົາໄດ້ຮັບ "**ມໍຣະດົກ**". ດັ່ງນັ້ນ, ແມ່ນຫຍັງຄືມູນມໍຣະດົກຂອງພວກເຮົາ? ບາງຄົນອາດຄິດວ່າມູນມໍຣະດົກຂອງພວກເຮົາແມ່ນສວັນ, ແລະແນ່ນອນນັ້ນຄືຄວາມຈິງ. ພວກເຮົາຈະໄດ້ຮັບເໝືອນກັນ ມູນມໍຣະດົກທັງໝົດທີ່ພຣະເຈົ້າຊົງສັນຍາໃຫ້ໄວ້ກັບປະຊາກອນຂອງພຣະອົງ-ແລະພວກເຮົາຈະມີ **ນິຣັນດອນ** ທີ່ຈະປະສົບກັບພຣະພອນທັງໝົດເຫຼົ່ານີ້.

ອີກທາງນຶ່ງຊຶ່ງຈະມອງເບິ່ງມູນມໍຣະດົກນີ້ແມ່ນການທີ່ເຫັນພຣະເຈົ້າພຣະອົງເອງ. ພວກເຮົາຮັບເອົາຄວາມສັມພັນທະພາບກັບພຣະເຈົ້າ, ໂອກາດທີ່ຈະໄດ້ເຂົ້າມາຫາການຊົງສະຖິດຂອງພຣະອົງ, ແລະພຣະສັນຍາທີ່ຈະໄດ້ໃຊ້ເວລາຊົ່ວນິດນິຣັນຢູ່ກັບພຣະອົງ. ໃນຖານະເປັນບຸດຂອງພຣະເຈົ້າ, ພວກເຮົາເປັນ "*ຜູ້ຮ່ວມຮັບມໍຣະດົກກັບພຣະຄຣິດ*" (ຂໍ້ 17). ທ່ານໂປໂລໄດ້ເຕືອນບັນດາຜູ້ທີ່ເຊື່ອວ່າມູນມໍຣະດົກຂອງພວກເຮົາອາດຈະມີຄວາມໝາຍເໝືອນກັບວ່າ "ພວກເຮົາຮ່ວມທຸກທໍຣະມານກັບພຣະອົງ". ***ຄວາມທຸກທໍຣະມານແມ່ນເປັນຢູ່ຊົ່ວຄາວ, ແຕ່ວ່າພຣະພອນທັງຫຼາຍຂອງການຊົງຮັບເອົາເປັນບຸດແມ່ນເປັນຢູ່ຊົ່ວນິຣັນ!***

*ແມ່ນຫຍັງຄືຄວາມໝາຍຕໍ່ກຸ່ມຂອງພວກເຮົາທີ່ພວກເຮົາຖືກຮັບເຂົ້າມາເປັນຄອບຄົວຂອງພຣະເຈົ້າ?*

## ນຳໃຊ້ໃນຊີວິດ

ການຊົງສະຖິດຢູ່ນຳຂອງພຣະວິນຍານບໍຣິສຸດໃນຊີວິດຂອງພວກເຮົາຢືນຢັນເຖິງຄວາມສັມພັນຂອງພວກເຮົາກັບພຣະເຈົ້າ. ຈົ່ງໃຊ້ນຶ່ງໃນການນຳໃຊ້ດັ່ງຕໍ່ລົງໄປນີ້:

- **ຈົ່ງອະທິຖານ.** ຈົ່ງພັກພິງໃນພຣະວິນຍານບໍຣິສຸດໃນເມື່ອທ່ານໂດດດ່ຽວ. ໃນເວລາທີ່ທ່ານມີຄວາມຮູ້ສຶກໂດດດ່ຽວແລະຖືກແຍກຈາກຄົນອື່ນໆ, ຈົ່ງອະທິຖານ. ຈົ່ງທູນຂໍຕໍ່ພຣະເຈົ້າໃຫ້ຊົງຊ່ອຍທ່ານໃຫ້ມີຄວາມຮູ້ສຶກການຊົງສະຖິດຢູ່ນຳຂອງພຣະອົງ.
- **ຈົ່ງຈົດຈຳ.** ຈົ່ງຈົດຈຳພຣະທັມໂຣມ 8:15-16 ເພື່ອເຕືອນທ່ານເອງໃນຄວາມສັມພັນອັນແນ່ນອນຂອງທ່ານກັບພຣະຄຣິດ.
- **ຈົ່ງມອບກາຍຖວາຍຊີວິດ.** ໃນເມື່ອຄວາມບາບແລະການທົດລອງມາເຄາະ(ປະຕູໃຈ)ຂອງທ່ານ, ຈົ່ງຈຳໄວ້ວ່າໃນອົງພຣະຄຣິດ, ທ່ານໄດ້ປະຫານຄວາມບາບໄປແລ້ວ. ຈົ່ງສາຣະພາບບາບທັງຫຼາຍທີ່ພຣະວິນຍານບໍຣິສຸດຊົງຕັດສິນທ່ານ. ຈົ່ງທູນຂໍຕໍ່ພຣະອົງໃຫ້ຊົງຊ່ອຍທ່ານກຳຈັດມັນອອກໄປ. ຈົ່ງໂຫດຫ້ຽມກັບບາບເຫຼົ່ານັ້ນ. ຈົ່ງເຊີນຊວນເພື່ອນຄຣິສຕຽນຄົນນຶ່ງໃຫ້ມາຮັບໃຊ້ເປັນຜູ້ຮ່ວມກວດກາໂດຍສະເພາະໃນຈຸດອ່ອນແອຂອງທ່ານ.

ພວກເຮົາໝົດທຸກຄົນມີຊ່ວງເວລາທີ່ມີຄວາມຮູ້ສຶກໂດດດ່ຽວ, ແຕ່ໃນຖານະທີ່ເປັນຜູ້ຕິດຕາມອົງພຣະຄຣິດ, ພວກເຮົາບໍ່ເຄີຍໄດ້ຢູ່ຄົນດຽວຈັກເທື່ອ. ພຣະວິນຍານບໍຣິສຸດຊົງສະຖິດຢູ່ໃນພວກເຮົາ. ພຣະອົງຊົງນຳພາພວກເຮົາ. ພຣະອົງຊົງຮັບປະກັນພວກເຮົາໃນການຢືນຢູ່ໃນຄອບຄົວຂອງພຣະເຈົ້າ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ SSK**